# ສັງເກດເຫັນຄວາມສຸກຢູ່ຕາມເສັ້ນທາງລົດໄຟ ລາວ-ຈີນ

ວັນທີ 4 ພະຈິກນີ້, ກິດຈະກຳຊຸກຍູ້ການສ້າງ "ແລວທາງແຫ່ງຄວາມສີວິໄລທາງວັດທະນະທຳຍຸກໃໝ່ ພຶດຕິກຳຕົວຈິງແຫ່ງການສົ່ງເສີມສ້າງຄວາມສີວິໄລຕາມຊາຍແດນຢຸນນານ" ໄດ້ຈັດຂຶ້ນຢູ່ນະຄອນຊຽງຮຸ່ງກິ່ງແຂວງປົກຄອງຕົນເອງເຜົ່າລື້ສິບສອງພັນນາ ແຂວງຢຸນນານ. ນັບແຕ່ເປີດນຳໃຊ້ເປັນຕົ້ນມາ, ເສັ້ນທາງລົດໄຟລາວ-ຈີນ ທີ່ເປັນ "ເສັ້ນທາງຄຳດ້ານການຂົນສົ່ງ" ທີ່ໄດ້ບັນທຸກຄວາມໄຝ່ຝັນຂອງສອງຊາດລາວ ແລະ ຈີນ ໄດ້ກາຍເປັນ "ເສັ້ນທາງສ້າງຄວາມຮັ່ງມີ" ທີ່ກະຕຸ້ນການຮ່ວມມືດ້ານເສດຖະກິດການຄ້າພາກພື້ນ ແລະ ໄດ້ກາຍເປັນສາຍພານອັນອົບອຸ່ນແຫ່ງພຶດຕິກຳຕົວຈິງ ແຫ່ງການສົ່ງເສີມຄວາມສີວິໄລທາງວັດທະນະທຳ ແລະ ການຮຽນຮູ້ລະຫວ່າງຄວາມສີວິໄລທາງວັດທະນະທຳ. ມັນໄດ້ສ້າງໂອກາດພັດທະນາໃຫ້ແກ່ບ້ານ ແລະ ຕົວເມືອງຕ່າງໆຢູ່ລຽບຕາມເສັ້ນທາງລົດໄຟ ແລະ ຊ່ວຍຫຼາຍໆຄົນບັນລຸຄວາມຝັນຂອງຕົນ.






## ເສັ້ນທາງສາຍໜຶ່ງເຊື່ອມຕໍ່ຄວາມໄຝ່ຝັນ

ປີ້ຂະບວນລົດໄຟໂດຍສານສາກົນ D87 ຈາກນະຄອນຄຸນໝິງ, ສປ ຈີນເດີນທາງໄປຫານະຄອນຫຼວງວຽງຈັນຂອງລາວຂາຍດີບຂາຍດີ. ເສັ້ນທາງລົດໄຟລາວ-ຈີນ ບໍ່ພຽງແຕ່ເປັນເສັ້ນທາງເສດຖະກິດການຄ້າສາຍໃໝ່ເທົ່ານັ້ນ, ຍິ່ງແມ່ນສາຍພານອະລິຍະທຳທີ່ອົບອຸ່ນສາຍໜຶ່ງ ທີ່ໄດ້ເຊື່ອມຕໍ່ຄວາມໄຝ່ຝັນຂອງປະຊາຊົນສອງຊາດ.

ຄວາມໄຝ່ຝັນຂອງ ທ້າວ ເອກະລາດ ທີ່ເປັນຄົນລາວ ໄດ້ພົວພັນກັບເສັ້ນທາງ ລົດໄຟສາຍນີ້ຢ່າງແໜ້ນແຟ້ນ. ເອື້ອຍສອງຄົນຂອງລາວເຄີຍໄປຮຽນພາສາຈີນ ແລະ ໄດ້ຮັບການຝຶກອົບຮົມວິຊາຊີບຢູ່ມັດທະຍົມອາຊີວະສຶກສາ ເມືອງຫຼ້າ ກິ່ງແຂວງສິບສອງພັນນາ. 20 ປີຜ່ານມາ, ໂຮງຮຽນແຫ່ງນີ້ໄດ້ຝຶກອົບຮົມນັກຮຽນລາວເກືອບ 3,000 ຄົນ. ເມື່ອເຫັນເອື້ອຍ ແລະ ໝູ່ນັກຮຽນຫຼາຍຄົນຮຽນຈົບແລ້ວ, ບາງຄົນກາຍເປັນຫົວໜ້າໜ່ວຍພະນັກງານຢູ່ຕາມຂະບວນລົດໄຟ, ບາງຄົນໄດ້ເຮັດການຄ້າຂາຍລະຫວ່າງສອງປະເທດລາວ ແລະ ຈີນ,ມີບາງຄົນໄດ້ສ້າງທຸລະກິດຂອງຕົນ. ທ້າວ ເອກະລາດ ກໍໄດ້ຮຽນຢູ່ຫ້ອງຮຽນພາສາຈີນຫ້ອງ 58 ຂອງໂຮງຮຽນແຫ່ງນີ້ ເຊິ່ງໄດ້ເລີ່ມຊີວິດໃໝ່ຂອງຕົນ.

ທ້າວ ເອກະລາດ ກ່າວວ່າ: "ຍ້ອນວ່າມີເສັ້ນທາງລົດໄຟລາວ-ຈີນ, ຂ້າພະເຈົ້າຈະສາມາດບັນລຸຄວາມຝັນຂອງຕົນຢ່າງວ່ອງໄວ. ຄວາມວ່ອງໄວແບບນີ້ບໍ່ພຽງແຕ່ແມ່ນລົດໄຟແລ່ນໄດ້ໄວເທົ່ານັ້ນ, ຫາກຍັງໄດ້ຊ່ວຍໃຫ້ ທ້າວ ເອກະລາດ ເຕີບໃຫຍ່ຂຶ້ນໄວກວ່າເກົ່າ. ລາວເຫັນວ່າ: ໝາກມ່ວງ ແລະ ໝາກລຳໄຍສົດໆໃນບ້ານເກີດຂອງຕົນສາມາດຂົນສົ່ງໄປຂາຍຢູ່ຕະຫຼາດນະຄອນຄຸນໝິງຂອງຈີນພາຍໃນເວລາມື້ໜຶ່ງ ເຊິ່ງໄດ້ສ້າງລາຍຮັບທີ່ດີໃຫ້ແກ່ຊາວບ້ານທັງຫຼາຍ, ເຮັດໃຫ້ ທ້າວ ເອກະລາດ ຮູ້ສຶກວ່າ: "ຊີວິດການເປັນຢູ່ຂອງປະຊາຊົນ ນັບມື້ນັບດີຂຶ້ນຍ້ອນການເປີດນຳໃຊ້ເສັ້ນທາງລົດໄຟສາຍນີ້."

ເຊັ່ນດຽວກັນກັບ ທ້າວ ເອກະລາດ, ທ້າວ ຈຽງໄຊ ກໍໄດ້ຂີ່ລົດໄຟມາຮຽນຢູ່ ແຂວງຢຸນນານ ຂອງຈີນ, ປັດຈຸບັນ, ລາວສາມາດເວົ້າພາສາຈີນ ໄດ້ຢ່າງຫຼ່ຽນ ໄຫຼແລ້ວ. ບ້ານເກີດຂອງທ້າວ ຈຽງໄຊ ຢູ່ເຂດຜະລິດຊາຂອງແຂວງຜົ້ງສາລີ, ລາວກໍມີຄວາມຮູ້ສຶກອັນເລິກເຊິ່ງຕໍ່ການປ່ຽນແປງຕ່າງໆ ທີ່ເກີດມາຈາກເສັ້ນທາງ ລົດໄຟລາວ-ຈີນ. ປູ່ຂອງລາວມັກເວົ້າວ່າ: ແຕ່ກ່ອນ, ການຂົນສົ່ງຊາອອກໄປຂາຍຕ້ອງໃຊ້ແຮງມ້າໃນການຂົນສົ່ງເທື່ອລະໜ້ອຍ, ປັດຈຸບັນ, ເສັ້ນທາງລົດໄຟລາວ -ຈີນ ສາມາດຂົນສົ່ງຊາຂອງຜົ້ງສາລີໄປທົ່ວໂລກ.

ທ້າວ ເອກະລາດ ກ່າວວ່າ: "ພາຍຫຼັງຮຽນຈົບແລ້ວ, ຂ້າພະເຈົ້າຢາກກາຍເປັນ

ທູດເຊື່ອມຕໍ່ການພັດທະນາລະຫວ່າງສອງປະເທດລາວ ແລະ ຈີນ ຄືພວກເອື້ອຍ ເພື່ອເຮັດໃຫ້ຊາວບ້ານທັງຫຼາຍສາມາດຊົມໃຊ້ຜົນປະໂຫຍດຈາກເສັ້ນທາງລົດໄຟລາວ-ຈີນ ໄດ້ດີກວ່າເກົ່າ."





## ກຸ່ມຄົນໜຶ່ງນຳພາ 3 ບ້ານສ້າງຄວາມຮັ່ງມີ

ຢູ່ຕາແສງເມືອງຮັນ ນະຄອນຊຽງຮຸ່ງ ກິ່ງແຂວງສິບສອງພັນນາ, ບ້ານຄົງໄຕ, ບ້ານຫຼວງຈັນ ແລະ ບ້ານຄົງໄມ ທີ່ລຽບຕາມເສັ້ນທາງລົດໄຟລາວ-ຈີນ ພວມໄດ້ເກີດມີການປ່ຽນແປງໃໝ່. ປັດຈຸບັນ, ຢູ່ 3 ບ້ານດັ່ງກ່າວ, ທັງໄດ້ຮັກສາເຮືອນຮ້ານແບບດັ້ງເດີມຂອງເຜົ່າລື້, ຍັງໄດ້ເພີ່ມສີສັນໃນການຕົບແຕ່ງແບບທັນສະໄໝ ເຊິ່ງໄດ້ກາຍເປັນສະຖານທີ່ ທີ່ດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດມາສຳຜັດກັບວັດທະນະທຳເຜົ່າລື້ຢູ່3 ບ້ານດັ່ງກ່າວ.

ອ້າຍ ຮັນນິງ ປີນີ້ລາວມີອາຍຸ 46 ປີ ໄດ້ສຳຜັດກັບການປ່ຽນແປງແບບນີ້ ກ່ອນໝູ່ໃນບ້ານ. ລາວກ່າວວ່າ: "ໃນຊຸມປີຜ່ານມາ, ຊາວຕ່າງປະເທດ ທີ່ມາ ທ່ອງທ່ຽວຢູ່ບ້ານຂອງຂ້ອຍນັບມື້ນັບຫຼາຍຂຶ້ນ. ພວກເຂົາເຈົ້າໄດ້ຂີ່ລົດໄຟຕາມເສັ້ນທາງລົດໄຟລາວ-ຈີນເຂົ້າມາ, ມີນັກສຶກສາ, ນັກຂ່າວ ແລະ ຜູ້ຊ່ຽວຊານ, ຍັງມີເຈົ້າໜ້າທີ່ການທູດ ແລະ ທູຕານຸທູດຕ່າງປະເທດປະຈຳຈີນ." ແຕ່ກ່ອນ, ຕົນຂາຍເຄື່ອງໃຊ້ປະຈຳວັນ ແລະ ປູກໝາກຫຸ່ງເພື່ອລ້ຽງຊີບ; ປັດຈຸບັນ, ຍ້ອນໄດ້ເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ, ການຈໍລະຈອນສິນຄ້າມີຄວາມສະດວກສະບາຍ ແລະ ນັກທ່ອງທ່ຽວໄດ້ເຂົ້າມາທ່ອງທ່ຽວຢ່າງຫຼວງຫຼາຍ, ຂ້ອຍຂາຍ ຜະລິດຕະພັນກະສິກຳ, ຂາຍກາເຟລາວ ແລະ ກາເຟໄທ, ລາຍຮັບຕໍ່ເດືອນ ປະມານ 4,000 ຢວນ. "ບ້ານໄດ້ເກີດມີການປ່ຽນແປງໃໝ່, ຊີວິດການເປັນຢູ່ ຂອງພວກເຮົາກໍນັບມື້ນັບດີຂຶ້ນ."

ການປ່ຽນແປງໄດ້ເລີ່ມຕົ້ນແຕ່ປີ 2023. ອົງການປົກຄອງທ້ອງຖິ່ນໄດ້ຮ່ວມມືກັບທີມງານສາສະດາຈານ ຫຼີສຽວຢຸນ ຂອງມະຫາທະຍາໄລກະສິກຳຈີນ, ໄດ້ພັດທະນາ 3 ບ້ານດັ່ງກ່າວເປັນບ້ານຕົວແບບທີ່ພັດທະນາກະສິກຳ, ວັດທະນະທຳ ແລະ ການທ່ອງທ່ຽວແບບເຊື່ອມໂຍງເຂົ້າກັນ ໂດຍອີງໃສ່ທ່າແຮງດ້ານທີ່ຕັ້ງທີ່ລຽບຕາມເສັ້ນທາງລົດໄຟລາວ-ຈີນ: ໄດ້ມີການປັບປຸງໜອງປາໃຫ້ກາຍເປັນສະລອຍນ້ຳ, ປັບປຸງສາງເຄື່ອງກາຍເປັນຮ້ານນ້ຳຊາ, ສ້າງສວນສາທາລະນະເຜີຍແຜ່ ວິທະຍາສາດ ຢູ່ໃນສວນຢາງພາລາ, ປັບປຸງຫໍບຳບັດນ້ຳເສຍເກົ່າເປັນຮ້ານກາເຟ, ປັບປຸງເຮືອນເກົ່າເປັນຣີສອດ ທີ່ມີເອກະລັກພິເສດ...

ບ້ານຄົງໄຕ, ບ້ານຫຼວງຈັນ ແລະ ບ້ານຄົງໄມ ໄດ້ຕັ້ງໜ້າອົບຮົມບົ່ມສ້າງຜູ້ມີຄວາມຮູ້ຄວາມສາມາດໃນບ້ານ. ປັດຈຸບັນ, ໄດ້ອົບຮົມບົ່ມສ້າງນາຍຊ່າງບ້ານ ແລະ ຜູ້ນຳໜ້າດ້ານອຸດສາຫະກຳພາຍໃນບ້ານໄດ້ 90 ຄົນແລ້ວ ແລະ ສາມາດເຮັດໃຫ້ປະຊາຊົນພາຍໃນບ້ານ ຈຳນວນ 60 ກວ່າຄົນ ມີວຽກເຮັດງານທຳທີ່ໝັ້ນຄົງ. ຣີສອດຂອງນາງຢູຈ່າງ ມີລາຍໄດ້ຫຼາຍກວ່າໝື່ນຢວນຕໍ່ເດືອນ. ນາງກ່າວວ່າ: "ແຕ່ກ່ອນບໍ່ມີວຽກປະຈຳ, ບໍ່ມີລາຍຮັບຄົງທີ່, ດຽວນີ້ ໄດ້ເປີດຣີສອດ, ກໍໄດ້ສ້າງ ລາຍຮັບຄົງທີ່ເພີ່ມຂຶ້ນໃຫ້ແກ່ຂ້າພະເຈົ້າແລ້ວ." ນາງ ຢູມັນຊຽງ ທີ່ເຮັດວຽກຢູ່ຮ້ານ ກາເຟຂອງບ້ານ, ໄດ້ຮັບເງິນເດືອນຕ່ຳສຸດ 2,000 ຢວນຕໍ່ເດືອນ ນອກນີ້, ຍັງມີເງິນສ່ວນແບ່ງຈາກຜົນກຳໄລຂອງຮ້ານຕື່ມອີກ.

ການປ່ຽນແປງຂອງບ້ານຄົງໄຕ, ບ້ານຫຼວງຈັນ ແລະ ບ້ານຄົງໄມ ໄດ້ສະແດງໃຫ້ເຫັນເຖິງພຶດຕິກຳຕົວຈິງໃນການສ້າງແລວທາງແຫ່ງຄວາມສີວິໄລທາງວັດທະນະທຳຍຸກໃໝ່ ຕາມເສັ້ນທາງລົດໄຟລາວ-ຈີນ. ເສັ້ນທາງລົດໄຟສາຍນີ້ໄດ້ເຊື່ອມຕໍ່ສອງປະເທດ ລາວ ແລະ ຈີນ, ກໍໄດ້ຊຸກຍູ້ການພັດທະນາດ້ານອຸດສາຫະກຳ ແລະ ເພີ່ມຄວາມເຂົ້າໃຈກັນລະຫວ່າງປະຊາຊົນສອງຊາດ, ຍັງໄດ້ເຮັດໃຫ້ບ້ານເຜົ່າລື ທີ່ເກົ່າແກ່ບູຮານປະກົດມີພະລັງຊີວິດ ແລະ ເພີ່ມຄວາມມີຊີວິດຊີວາໃໝ່ໃນການ ຮຽນຮູ້ເຊິ່ງກັນ ແລະ ກັນດ້ານອະລິຍະທຳ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com